# "ວິທະຍາສາດເຕັກໂນໂລຊີມືດ" ເຮັດໃຫ້ໄປສະນີດ່ວນໄວກວ່າເກົ່າ





ໂຕເລກຂໍ້ມູນ ທີ່ອີງການໄປສະນີແຫ່ງຊາດຈີນ ເປີດເຜີຍໃນວັນທີ 18 ພະຈິກນີ້ ສະແດງໃຫ້ເຫັນວ່າ: ເຄື່ອງໄປສະນີດ່ວນສະບັບທີ 150 ຕື້ຂອງຂະແໜງການໄປສະນີດ່ວນຈີນ ໄດ້ກຳເນີດຂຶ້ນໃນວັນທີ 17 ພະຈິກ 2014. ສ່ວນຈຳນວນໄປສະນີດ່ວນໃນວັນທີ 11 ພະຈິກ ທີ່ເປັນເທດສະການຊື້ເຄື່ອງທາງອິນເຕີເນັດຂອງຈີນ ໄດ້ບັນລຸເຖິງ 701 ລ້ານສະບັບ, ໄດ້ສ້າງສະຖິຕິສູງສຸດໃນປະຫວັດສາດເທດສະການດັ່ງກ່າວ. ເຮັດແນວໃດຈຶ່ງຈະເຮັດໃຫ້ໄປສະນີດ່ວນ ຫຼາຍຮ້ອຍລ້ານສະບັບ ສົ່ງໄປເຖິງຜູ້ຮັບເຄື່ອງໄປສະນີຢ່າງປອດໄພ ແລະ ວ່ອງໄວ, ການນຳໃຊ້ວິທະຍາສາດເຕັກໂນໂລຊີມືດຕ່າງໆ ໄດ້ເສີມຂະຫຍາຍບົດບາດສຳຄັນ. ໃນຊຸມປີຜ່ານມາ, ການຮັບເອົາເຄື່ອງທາງໄປສະນີແບບອັດສະລິຍະ, ການແຈກເຄື່ອງໄປສະນີແບບອັດສະລິຍະ, "ສະຖານີຮັບ-ສົ່ງໄປສະນີຕະຫຼອດ 24 ຊົ່ວໂມງ", ຕູ້ໄປສະນີອັດສະລິຍະ, ການຮັບສົ່ງໄປສະນີດ້ວຍຫຸ່ນຍົນ ແລະ ເຮືອບິນບໍ່ມີຄົນຂັບເປັນຕົ້ນ ໄດ້ຍົກປະສິດທິພາບຂອງຂະແໜງການໄປສະນີດ່ວນ ທີ່ອຳນວຍຄວາມສະດວກໃຫ້ແກ່ຊີວິດການເປັນຢູ່ຂອງຄົນທັງຫຼາຍ.

## ການຮັບເອົາເຄື່ອງໄປສະນີໄວກວ່າເກົ່າ

ໃນເວລາຮັບເຄື່ອງໄປສະນີ, ສາຍໄຟອັດສະລິຍະເທິງກະເປົາຈະຮຸ່ງຂຶ້ນແບບອັດຕະໂນມັດ ແລະ ຍັງມີສຽງດັງຂຶ້ນ, ຜູ້ຮັບເຄື່ອງໄປສະນີ ຈະສາມາດຈັບເອົາເຄື່ອງຂອງຕົນໄດ້ຢ່າງວ່ອງໄວ ແລະ ຖືກຕ້ອງ. ໃນເທດສະການຊື້ເຄື່ອງທາງອິນເຕີເນັດຂອງຈີນປີນີ້, ສະຖານີຮັບ-ສົ່ງເຄື່ອງໄປສະນີດ່ວນໄຊ້ນຽວ (Cainiao) ຂອງ ກຸ່ມບໍລິສັດອາລີບາບາ ໄດ້ເລີ່ມການບໍລິການຕິດ "ສາຍໄຟອັດສະລິຍະ" ຢູ່ຕາມເຄື່ອງໄປສະນີດ່ວນ ໃນ 100 ກວ່າຕົວເມືອງຂອງຈີນ ເຊິ່ງໄດ້ອຳນວຍຄວາມສະດວກທີ່ໃໝ່ອຸ່ມມີປະສິດທິພາບສູງກວ່າເກົ່າ ແລະ ເປັນເລື່ອງທີ່ແປກໆມ່ວນໆ ໃຫ້ແກ່ລູກຄ້າ.

"ມີສຽງ, ມີໄຟຮຸ່ງຂຶ້ນ, ຈະສາມາດຊອກ ໄດ້ເຄື່ອງໄປສະນີດ່ວນຂອງຕົນ ໃນທັນທີ, ຮູ້ສຶກດີຫຼາຍ". "ອາຍຸຫຼາຍແລ້ວ, ໂຕເລກນ້ອຍໆເທິງເຄື່ອງໄປສະນີດ່ວນຈະເບິ່ງບໍ່ເຫັນແລ້ວ. ໂດຍຜ່ານຈາກການສະແກນ QR-Code ຢູ່ຕາມແອັບ Taobao ຫຼື ໄຊ້ນຽວ, ເຄື່ອງໄປສະນີດ່ວນຂອງຂ້ອຍ ກໍມີໄຟຮຸ່ງຂຶ້ນ, ສະດວກສະບາຍທີ່ສຸດ." ຊາວເມືອງທີ່ໄປຮັບເຄື່ອງໄປສະນີດ່ວນຂອງຕົນ ຢູ່ສະຖານີຮັບ-ສົ່ງໄປສະນີດ່ວນ ນະຄອນຕ້າຫຼຽນ ແຂວງຫຼຽວໜິງ ກ່າວວ່າ: "ສາຍໄຟອັດສະລິຍະ" ເຮັດໃຫ້ຕົນຮູ້ສຶກສະບາຍຫຼາຍ ໃນເວລາໄປຮັບເອົາເຄື່ອງໄປສະນີດ່ວນ.

ສາຍໄຟອັດສະລິຍະມີ 7 ສີ ຄື: ສີແດງ, ສີໝາກກ້ຽງ, ສີເຫຼືອງ, ສີຂຽວ, ສີຂຽວອ່ອນ, ສີຟ້າ ແລະ ສີອິດ, ເມື່ອສະແກນ, ເຄື່ອງໄປສະນີດ່ວນຂອງລູກຄ້າຄົນດຽວຈະປະກົດເປັນສີດຽວ. ຢູ່ສະຖານີຮັບ-ສົ່ງເຄື່ອງໄປສະນີໃຫຍ່, ລະບົບສາຍໄຟອັດສະລິຍະ ຍັງໄດ້ຈັດສັນເຄື່ອງຕາມເລກໝາຍສຸດທ້າຍຂອງລູກຄ້າ; ໃນເວລາໄປຮັບເຄື່ອງ, ລະບົບດັ່ງກ່າວ ຍັງບົ່ງບອກເຂດໄປຮັບເຄື່ອງໃຫ້ແກ່ລູກຄ້າທີ່ຕ່າງກັນ.

ທ່ານ ເຜິງເຈ່ຍປິ່ນ ຫົວໜ້າ ສະຖານີຮັບ-ສົ່ງເຄື່ອງໄປສະນີແຫ່ງໜຶ່ງກ່າວວ່າ: "ໃນເວລາທີ່ມີຈຳນວນເຄື່ອງໄປສະນີດ່ວນຫຼາຍ ໃນໄລຍະເທດສະການຊື້ເຄື່ອງທາງອິນເຕີເນັດ, ຈຳນວນເຄື່ອງໄປສະນີດ່ວນຈະມີ 1.800 ເຄື່ອງ ເຊິ່ງໄດ້ຫຼາຍກວ່າຍາມທຳມະດາ ປະມານ 60%." ພາຍຫຼັງມີສາຍໄຟອັດສະລິຍະແລ້ວ, ການຮັບ-ສົ່ງເຄື່ອງໄປສະນີ ມີຄວາມສະດວກວ່ອງໄວກວ່າເກົ່າ.

ຕາມຂ່າວແຈ້ງວ່າ: ໃນໄລຍະເທດສະການຊື້ເຄື່ອງທາງອິນເຕີເນັດປີນີ້, ບໍລິສັດ ແລະ ສະຖານີໄປສະນີດ່ວນຂອງຈີນຫຼາຍແຫ່ງລ້ວນແຕ່ໄດ້ອັບເດດເຕັກນິກອັດສະລິຍະ ແລະ ການບໍລິການຂອງຕົນ ໃຫ້ສູງຂຶ້ນ ໂດຍໄດ້ຈັດໃຫ້ມີການບໍລິການຮັບເຄື່ອງໄປສະນີດ້ວຍຕົນເອງຕະຫຼອດ 24 ຊົ່ວໂມງ ເພື່ອຮັບໃຊ້ລູກຄ້າໃຫ້ໄດ້ດີກວ່າເກົ່າ. ໂຕເລກຂໍ້ມູນເປີດເຜີຍສະແດງໃຫ້ເຫັນວ່າ: ສະຖານີໄປສະນີດ່ວນໄຊ້ນຽວ ໄດ້ເລີ່ມຮູບແບບໄປສະນີບໍ່ມີຄົນເຝົ້າເປັນຄັ້ງທຳອິດ, ສະຖານີໄປສະນີດ່ວນໄຊ້ນຽວ ທີ່ໄດ້ເປີດບໍລິການກາງຄືນ ມີຫຼາຍກວ່າໜຶ່ງໝື່ນແຫ່ງ ເຊິ່ງໄດ້ປົກຄຸມ 200 ກວ່າຕົວເມືອງຂອງຈີນ.

ພາບໂດຍ: ສຳນັກຂ່າວສານຊິນຮວາ

## ສົ່ງໄປສະນີ ໄດ້ໄວກວ່າເກົ່າ

ຕອນເຊົ້າ, ຢູ່ແຈຫ້ອງໂຖງຕຶກສູນບໍລິການທຸລະກິດຊິງອ່ານ ແຂວງເຫີເປີຍ, ຫຸ່ນຍົນສົ່ງໄປສະນີໃນຕຶກແບບອັດສະລິຍະ ກໍເລີ່ມສົ່ງເຄື່ອງແລ້ວ.

ທ້າວ ສຽວຊີເຈ່ຍ ພະນັກງານບໍລິສັດສົ່ງໄປສະນີດ່ວນ ຊຸ້ນເຟິງເຫີເປີຍ ສາຂາຊິງອ່ານ ທັງສະແກນ QR-Code ຕາມໜ້າຈໍຫຸ່ນຍົນສົ່ງເຄື່ອງໄປສະນີດ່ວນເຄື່ອງໜຶ່ງ ທັງກ່າວວ່າ: "ຫຸ່ນຍົນເຄື່ອງນີ້ຊື່ວ່າ ສຽວເຟິງ, ມັນສາມາດຂຶ້ນຕຶກແບບອັດຕະໂນມັດ." ປະຕູຢູ່ຕາມຮ່າງກາຍ "ສຽວເຟິງ" ໄດ້ຄ່ອຍໆເປີດອອກ, ທ້າວ ສຽວຊີເຈ່ຍ ໄດ້ປ່ອຍກະເປົາເຂົ້າໄປ, ໄດ້ກົດຄຳສັ່ງຈັດສົ່ງຢູ່ຕາມໜ້າຈໍ, ໂທລະສັບຂອງລູກຄ້າ ແລະ ຂໍ້ມູນອື່ນໆ ເພື່ອອອກຄຳສັ່ງຈັດສົ່ງ.

ເມື່ອໄດ້ຮັບໜ້າທີ່ແລ້ວ, "ສຽວເຟິງ" ໄດ້ເວົ້າດ້ວຍສຽງໜ້າຮັກວ່າ: "ນ້ອຍຈະອອກເດີນທາງແລ້ວເດີ້!" ຫຼັງຈາກນັ້ນ, ມັນໄດ້ຂີ່ລິບ ໄປເຖິງຊັ້ນຂອງລູກຄ້າ ແລະ ໂທຫາລູກຄ້າແບບອັດຕະໂນມັດວ່າ: "ເຄື່ອງໄປສະນີຂອງທ່ານມາຮອດແລ້ວເດີ້, ຂໍໃຫ້ທ່ານມາຮັບເຄື່ອງຢູ່ໜ້າປະຕູລິບ." ພາຍຫຼັງສົ່ງເຄື່ອງແລ້ວໆ, "ສຽວເຟິງ" ໄດ້ຂີ່ລິບກັບຄືນແຈຫ້ອງໂຖຂອງຊັ້ນໜຶ່ງແບບອັດຕະໂນມັດ, ຈອດຢູ່ໃກ້ເສົາສາກໄຟ ແລະ ຄອຍຖ້າໜ້າທີ່ໃໝ່.

ຕາມຂ່າວແຈ້ງວ່າ: ຫຸ່ນຍົນສົ່ງເຄື່ອງໃນຕຶກຂອງບໍລິສັດຊຸ້ນເຟິງ ຖືກນຳໃຊ້ຢູ່ແຂວງກວາງຕຸ້ງ, ແຂວງຝູ້ຈຽນ, ແຂວງຊານຕົ່ງ, ແຂວງເຫີເປີຍ, ແຂວງຫຼຽວໜິງ, ແຂວງຈ້ຽງຊູ່, ແຂວງໄຫຼ້ຳ ແລະ ນະຄອນຫຼວງປັກກິ່ງ ເຊິ່ງໄດ້ຫຼຸດຕົ້ນທຶນໃນການຈັດສົ່ງເຄື່ອງໄປສະນີປາຍທາງ ແລະ ການອອກແຮງງານໜັກຂອງພະນັກງານສົ່ງເຄື່ອງໄດ້ຫຼຸດລົງຢ່າງຫຼວງຫຼາຍ.

ນອກຈາກບໍລິສັດຊຸ້ນເຟິງແລ້ວ, ການບໍລິການສົ່ງເຄື່ອງໄປສະນີດ່ວນ EMS ຂອງບໍລິສັດໄປສະນີແຫ່ງຊາດຈີນ ກໍໄດ້ທົດລອງປະຕິບັດແຜນການສົ່ງເຄື່ອງໄປສະນີດ່ວນແບບ "ລົດບໍ່ມີຄົນຂັບຢູ່ກາງແຈ້ງ + ຫຸ່ນຍົນຢູ່ໃນຫ້ອງ" ເຊິ່ງໄດ້ຍົກປະສິດທິພາບການສົ່ງເຄື່ອງໄປສະນີດ່ວນໄດ້ເຖິງ 50% ຂຶ້ນໄປ ເມື່ອທຽບໃສ່ຮູບແບບການສົ່ງເຄື່ອງແບບດັ້ງເດີມ.

ນອກນີ້, ເຮືອບິນບໍ່ມີຄົນຂັບ ກໍໄດ້ຖືກນຳໃຊ້ໃນການສົ່ງເຄື່ອງໄປສະນີດ່ວນ ຢ່າງເປັນກ້າວໆ. ບໍລິສັດເຟິງຢີ້ ທີ່ຂຶ້ນກັບບໍລິສັດຊຸ້ນເຟິງ ກໍໄດ້ບັນລຸການສົ່ງເຄື່ອງໄປສະນີດ່ວນ ຢູ່ໃນເມືອງ ແລະ ໃນເຂດແຄວ້ນໜຶ່ງ ດ້ວຍເຮືອບິນບໍ່ມີຄົນຂັບຢ່າງມີປະສິດທິພາບສູງ, ເຮືອບິນບໍ່ມີຄົນຂັບຂອງບໍລິສັດເຟິງຢີ້ ໄດ້ບໍລິການຢູ່ເຂດອ່າວໃຫຍ່ກວາງຕຸ້ງ - ຮົງກົງ - ມາກາວ ຢ່າງເປັນປົກກະຕິແລ້ວ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com



